# ແຈ້ງຂ່າວ
# ກ່ຽວກັບການນຳໃຊ້ເຄື່ອງໝາຍສັນຍະລັກໃໝ່ ທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍແຈ້ງມາຍັງທ່ານຊາບ ກ່ຽວກັບການນຳໃຊ້ເຄື່ອງໝາຍສັນຍະລັກໃໝ່ ຂອງ ທຫລ ຊຶ່ງຈະໄດ້ເລີ່ມນຳໃຊ້ໃນເດືອນ ທັນວາ 2022 ເປັນຕົ້ນໄປ ໂດຍການປັບປຸງເຄື່ອງໝາຍສັນຍະລັກໃໝ່ນີ້ ແມ່ນເພື່ອໃຫ້ສອດຄ່ອງກັບ ມາດຕາ 74 ຂອງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) (ເລກທີ 47/ສພຊ, ລົງວັນທີ 16 ມິຖຸນາ 2018) ທີ່ໄດ້ລະບຸໃຫ້ ທຫລ ມີເຄື່ອງໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ. ເນື່ອງຈາກທີ່ຜ່ານມາ ທຫລ ບໍ່ທັນມີເຄື່ອງໝາຍສັນຍະລັກ (Logo) ເປັນອັນສະເພາະຂອງຕົນ ແລະ ໄດ້ມີການນຳໃຊ້ກາໝາຍຊາດເປັນເຄື່ອງໝາຍສັນຍະລັກໃນການເຄື່ອນໄຫວວຽກງານ. ສະນັ້ນ, ທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ຄົ້ນຄວ້າອອກແບບເຄື່ອງໝາຍສັນຍະລັກ (Logo) ເປັນອັນສະເພາະຂອງຕົນ ໂດຍໄດ້ຮັບການເຫັນດີຈາກລັດຖະບານ ໃນວັນທີ 06 ຕຸລາ 2022. ສຳລັບເຄື່ອງໝາຍສັນຍະລັກໃໝ່ ທຫລ ເປັນຮູບວົງກົມ ໂດຍມີ “ຊ້າງຄູ່ ຊູເງິນຮາງສາມແຫ່ງ ເຊິ່ງໝາຍເຖິງສາມໜ້າທີ່ຕົ້ນຕໍຂອງທະນາຄານແຫ່ງ ສປປ ລາວ”. ການນຳເອົາ “ຊ້າງ” ມາເປັນສັນຍະລັກ ແມ່ນເພື່ອໃຫ້ສອດຄ່ອງກັບທ່າອ່ຽງຂອງພາກພື້ນ ແລະ ສາກົນ ທີ່ທະນາຄານກາງຂອງຫຼາຍປະເທດກໍໄດ້ນຳໃຊ້ສັດມຸງຄຸນມາສ້າງເປັນເຄື່ອງໝາຍສັນຍະລັກ. ການນຳໃຊ້ “ຊ້າງຄູ່” ເປັນເຄື່ອງໝາຍສັນຍະລັກໃໝ່ ທຫລ ເນື່ອງຈາກ “ຊ້າງ” ເປັນສັດໃຫຍ່ ເຂັ້ມແຂງ ແລະ ເປັນສັດມຸງຄຸນຂອງຊາດລາວ ປຽບສະເໝືອນກັບໜ້າທີ່ຂອງ ທຫລ ທີ່ເປັນທະນາຄານກາງຂອງປະເທດ ແນໃສ່ເຄື່ອນໄຫວໃຫ້ໝັ້ນຄົງ ແລະ ເຂັ້ມແຂງ; “ເງິນຮາງ 3 ແຫ່ງ” ເປັນຊັບສິນບັດທີ່ມີຄ່າຂອງຄົນລາວແຕ່ດຶກດຳບັນ ຊຶ່ງເປັນຕົວແທນຂອງສາມໜ້າທີ່ຕົ້ນຕໍຂອງທະນາຄານແຫ່ງ ສປປ ລາວ ແລະ “ໄຫຊັບສິນບັດ” ເປັນເຄື່ອງມືໃນການເກັບຮັກສາຊັບສິນບັດຂອງຄົນລາວແຕ່ດຶກດຳບັນ ເປັນອົງປະກອບຫຼັກ.

**ເຄື່ອງໝາຍສັນຍະລັກ ທຫລ (ແບບເກົ່າ)**

**ເຄື່ອງໝາຍສັນຍະລັກ ທຫລ (ແບບໃໝ່)**

**ສໍາລັບລາຍລະອຽດ ແລະ ຄວາມໝາຍຂອງເຄື່ອງໝາຍສັນຍະລັກໃໝ່ ທະນາຄານແຫ່ງ ສປປ ລາວ ມີຄືດັ່ງນີ້:**

- **ຂອບວົງກົມອ້ອມຮອບ** ສະແດງເຖິງຄວາມເປັນສູນກາງໃນການຄຸ້ມຄອງມະຫາພາກທາງດ້ານລະບົບການເງິນ-ເງິນຕາ ແລະ ລະບົບຊໍາລະສະສາງຂອງປະເທດ;
- **ດອກປະຈໍາຍາມ** ເປັນດອກດວງລວດລາຍລາວ ທີ່ມີຢູ່ໃນທະນະບັດເງິນກີບ ມີລັກສະນະຄ້າຍຄືດອກໄມ້ສີ່ກີບ ມີປາຍແຫຼມຊີ້ໄປສີ່ດ້ານເທົ່າກັນ;
- **ຊ້າງ** ເປັນສັດໃຫຍ່ ແລະ ສັດມຸງຄຸນປະຈໍາຊາດລາວ ເປັນສັນຍະລັກຂອງຄວາມຍິ່ງໃຫຍ່, ເຂັ້ມແຂງ ແລະ ໝັ້ນຄົງ ຊຶ່ງປຽບສະເໝືອນກັບພາລະບົດບາດຂອງ ທຫລ ທີ່ເປັນທະນາຄານກາງຂອງປະເທດ ທີ່ແນໃສ່ເຄື່ອນໄຫວໃຫ້ເຕີບໃຫຍ່, ເຂັ້ມແຂງ ແລະ ໝັ້ນຄົງ ເພື່ອເປັນກົງຈັກຄໍ້າຊູລະບົບການເງິນ-ເງິນຕາ ແລະ ລະບົບຊໍາລະສະສາງຂອງປະເທດ;
- **ເງິນຮາງ 3 ແທ່ງ** ເປັນຊັບສິນມີຄ່າຂອງຄົນລາວແຕ່ດຶກດໍາບັນ ຊຶ່ງເປັນຕົວແທນຂອງສາມທີ່ຕັ້ງພາລະບົດບາດຂອງ ທຫລ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ, ຄຸ້ມຄອງສະຖາບັນການເງິນ ແລະ ຄຸ້ມຄອງລະບົບຊໍາລະສະສາງໃຫ້ມີຄວາມໝັ້ນຄົງ, ປອດໄພ ແລະ ທັນສະໄໝ;
- **ຊ້າງຄູ່ ໃຊ້ງວງຊູເງິນຮາງຂຶ້ນໄວ້ເທິງງວງ** ສະແດງເຖິງການຮ່ວມແຮງຮ່ວມໃຈກັນຍຶດໝັ້ນເອົາສາມທີ່ຕັ້ງພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ ໄວ້ສູງສຸດ;
- **ໄຫ ຫຼື ຖົງຊັບສິນບັດ** ໃນສະໄໝດຶກດໍາບັນແມ່ນຕິດພັນກັບຈຸດພິເສດ ແລະ ວິຖີຊີວິດຂອງຄົນລາວດັ້ງເດີມທີ່ມັກນໍາເອົາຊັບສິນບັດມີຄ່າໃສ່ໃນໄຫຝັງດິນໄວ້ໃຫ້ປອດໄພ, ຊຶ່ງໃນໄລຍະໃໝ່ແມ່ນເກັບຮັກສາໄວ້ໃນຕູ້ເຊຟ;
- **ຊ້າງຄູ່ ໂອບອຸ້ມໄຫ ທີ່ມີຊັບສິນບັດລົ້ນອອກມາ** ໂດຍໃຊ້ເງິນຮາງເປັນສັນຍະລັກ ສະແດງເຖິງຄວາມອຸດົມສົມບູນໄປດ້ວຍຊັບສິນເງິນຄໍາ ແລະ ວັດຖຸມີຄ່າຂອງປະເທດ ໂດຍທີ່ທະນາຄານແຫ່ງ ສປປ ລາວ ເປັນຜູ້ປົກປັກຮັກສາ ແລະ ຄຸ້ມຄອງບໍລິຫານໃຫ້ເພີ່ມພູນຄູນສ້າງຂຶ້ນ;
- **ສີຟ້າແກ່** ສະແດງເຖິງຄວາມອຸດົມສົມບູນ, ຄວາມໝັ້ນຄົງເຂັ້ມແຂງ ແລະ ການພັດທະນາ;
- **ສີຄໍາ** ສະແດງເຖິງຄວາມຮັ່ງມີ ແລະ ຄວາມຮຸ່ງເຮືອງເຫຼືອງເຫຼື້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ.